ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້

ເລກທີ 380 /ກປ
ນະຄອນຫຼວງວຽງຈັນ, ວັນທີ 16 JUL 2013

# ຂໍ້ຕົກລົງ
## ຂອງລັດຖະມົນຕີ
## ວ່າດ້ວຍມາດຕະຖານຄອບຄົວຕົວແບບ ແລະບ້ານພັດທະນາ ດ້ານກະສິກຳ ແລະປ່າໄມ້

- ອີງຕາມດຳລັດຂອງລັດຖະບານ ເລກທີ 201/ລບ, ລົງວັນທີ 25 ເມສາ 2012 ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະມາດຖານການພັດທະນາ ໄລຍະ 2012 ຫາ 2015;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງ ກະຊວງກະສິກຳ ແລະປ່າໄມ້;
- ອີງຕາມບົດບັນທຶກກອງປະຊຸມ ກ່ຽວກັບການຄົ້ນຄວ້າກຳນົດມາດຕະຖານບ້ານພັດທະນາດ້ານກະສິກຳ ແລະປ່າໄມ້ ເລກທີ 0400/ກປ, ລົງວັນທີ 19 ກຸມພາ 2013.

## ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດມາດຕະຖານຄອບຄົວຕົວແບບ ແລະບ້ານພັດທະນາດ້ານກະສິກຳ ແລະປ່າໄມ້ ເພື່ອເປັນບ່ອນອີງ ທາງດ້ານນິຕິກຳ ໃຫ້ແກ່ຂະແໜງການກະສິກຳ ແລະປ່າໄມ້ ສູນກາງ ແລະທ້ອງຖິ່ນ ນຳໄປຈັດຕັ້ງປະຕິບັດ ຢ່າງເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

**ມາດຕາ 2 ຄອບຄົວຕົວແບບ ແລະບ້ານພັດທະນາດ້ານກະສິກຳ ແລະປ່າໄມ້**

ຄອບຄົວຕົວແບບດ້ານກະສິກຳ ແລະປ່າໄມ້ ແມ່ນຄອບຄົວທີ່ປະສົບຜົນສຳເລັດຈາກການຜະລິດກະສິກຳ ຫຼືປ່າໄມ້ດ້ານໃດໜຶ່ງ ໂດຍສາມາດສ້າງລາຍຮັບທີ່ໝັ້ນຄົງ ແລະບັນລຸມາດຕະຖານຄອບຄົວພັດທະນາດ້ານກະສິກຳ ແລະປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 3 ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງສາມາດຖ່າຍທອດຄວາມຮູ້ ແລະປະສົບການ ໃຫ້ແກ່ປະຊາຊົນ ແລະສັງຄົມ ນຳໄປຈັດຕັ້ງປະຕິບັດ ແລະຂະຫຍາຍອອກເປັນວົງກວ້າງ.

ບ້ານພັດທະນາດ້ານກະສິກຳ ແລະປ່າໄມ້ ແມ່ນບ້ານທີ່ມີຄອບຄົວພັດທະນາດ້ານກະສິກຳ ຫຼືປ່າໄມ້

ຫຼາຍກວ່າ 60% ຂອງຈໍານວນຄອບຄົວທັງໝົດພາຍໃນບ້ານ ແລະບັນລຸມາດຕະຖານບ້ານພັດທະນາດ້ານກະສິກໍາ ແລະປ່າໄມ້ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ມາດຕະຖານຄອບຄົວຕົວແບບ ແລະບ້ານພັດທະນາດ້ານກະສິກໍາ ແລະປ່າໄມ້

**ມາດຕາ 3 ມາດຕະຖານຄອບຄົວຕົວແບບດ້ານກະສິກໍາ ແລະປ່າໄມ້**

ຄອບຄົວຕົວແບບດ້ານກະສິກໍາ ແລະປ່າໄມ້ ແມ່ນຄອບຄົວທີ່ບັນລຸມາດຕະຖານເງື່ອນໄຂດ້ານການພັດທະນາ ດັ່ງນີ້:

1. ເປັນຄອບຄົວທີ່ດໍາເນີນການຜະລິດ ຫຼືບໍລິການດ້ານກະສິກໍາ ແລະປ່າໄມ້ ໃດໜຶ່ງ ທີ່ສາມາດສ້າງລາຍຮັບສະເລ່ຍຕໍ່ຫົວຄົນໃນຄອບຄົວ ບໍ່ຫຼຸດມາດຕະຖານທີ່ລັດຖະບານ ກໍານົດແຕ່ລະໄລຍະ;
2. **ຖ້າເປັນຄອບຄົວທີ່ດໍາເນີນການປູກຝັງ** ຕ້ອງມີດິນເປັນຂອງຕົນເອງ ໂດຍມີການນໍາໃຊ້ແນວພັນ ຫຼືເຕັກນິກໃໝ່ທີ່ໃຫ້ຜົນຜະລິດສູງ ເຂົ້າໃນການຜະລິດ;
3. **ຖ້າເປັນຄອບຄົວລ້ຽງສັດ** ສັດລ້ຽງ ຕ້ອງໄດ້ຮັບການສັກຢາກັນພະຍາດແຕ່ 85% ຂຶ້ນໄປ, ມີໜອງປາ ເພື່ອກັກຂັງນໍ້າໄວ້ ສໍາລັບການຜະລິດກະສິກໍາ;
4. **ຖ້າເປັນຄອບຄົວຜະລິດໄມ້** ຕ້ອງເປັນແບບຢ່າງໃນດ້ານການປູກຕົ້ນໄມ້ອຸດສາຫະກາ, ການກ້າເບ້ຍໄມ້ເປັນສິນຄ້າ, ການປົກປັກຮັກສາປ່າໄມ້, ການປຸງແຕ່ງໄມ້ ຫຼືການດໍາເນີນກິດຈະການທ່ອງທ່ຽວທໍາມະຊາດ ທີ່ຕິດພັນກັບການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 4 ມາດຕະຖານບ້ານພັດທະນາ ດ້ານກະສິກໍາ ແລະປ່າໄມ້**

ບ້ານພັດທະນາດ້ານກະສິກໍາ ແລະປ່າໄມ້ ແມ່ນບ້ານທີ່ບັນລຸມາດຕະຖານເງື່ອນໄຂ ດ້ານການພັດທະນາ ດັ່ງນີ້:

1. ລະບົບການຈັດຕັ້ງບ້ານ ໜັກແໜ້ນ, ເຂັ້ມແຂງ ໃນນັ້ນ ໜ່ວຍພັກ ໄດ້ຮັບການຢັ້ງຢືນເປັນໜ່ວຍພັກແຂງຮູ້ນໍາພາຮອບດ້ານ, ມີໜ່ວຍງານກະສິກໍາ ແລະປ່າໄມ້ບ້ານ ຊຶ່ງປະກອບມີວິຊາການ ຫຼືອາສາສະໝັກ ຢ່າງໜ້ອຍ 2 - 3 ຄົນ ທີ່ໄດ້ຜ່ານການຝຶກອົບຮົມດ້ານວິຊາສະເພາະປະຈໍາຢູ່ບ້ານ ເພື່ອນໍາພາປະຊາຊົນເຮັດຕົວຈິງ ໃນດ້ານການປູກຝັງ, ລ້ຽງສັດ ແລະຄຸ້ມຄອງຊົນລະປະທານ;
2. ເປັນບ້ານຢຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະສໍາເລັດການຈັດສັນເນື້ອທີ່ດິນກະສິກໍາ ແລະປ່າໄມ້ ເພື່ອໃຫ້ຄອບຄົວ ຄຸ້ມຄອງ ແລະນໍາໃຊ້ເຂົ້າໃນການຜະລິດ, ມີກົດລະບຽບຄຸ້ມຄອງ ແລະນໍາໃຊ້ປ່າໄມ້ ຫຼືປ່າຊຸມຊົນ ຢ່າງຈະແຈ້ງ ພ້ອມທັງປະຕິບັດຢ່າງເຂັ້ມງວດ;
3. ຈໍານວນຄອບຄົວໃນບ້ານ 80% (ແປດສິບສ່ວນຮ້ອຍ) ໄດ້ຮັບການຢັ້ງຢືນເປັນຄອບຄົວພັດທະນາດ້ານກະສິກໍາ ແລະປ່າໄມ້, ມີແຜນການພັດທະນາດ້ານກະສິກໍາ ແລະປ່າໄມ້ຂອງບ້ານທັງໄລຍະສັ້ນ ແລະໄລຍະຍາວ, ມີຂໍ້ມູນດ້ານສະຖິຕິກະສິກໍາ ແລະປ່າໄມ້ຢ່າງເປັນລະບົບ;
4. ການຜະລິດຂອງຄອບຄົວພາຍໃນບ້ານ 85% (ແປດສິບຫ້າສ່ວນຮ້ອຍ) ຂຶ້ນໄປຮູ້ເຮັດກະເສດສຸມ, ຊົນລະກະເສດ ຕິດພັນກັບການຮູ້ນໍາໃຊ້ເຕັກນິກທີ່ກ້າວໜ້າທັນສະໄໝ ເຂົ້າໃນການຜະ

ລິດ ເຊັ່ນ: ການນຳໃຊ້ແນວພັນ, ການປູກຝັງ, ການລ້ຽງສັດ, ການໃສ່ຝຸ່ນ, ການນຳໃຊ້ຢາປາບສັດຕູພືດ ແລະອື່ນໆ;

5. ຈຳນວນຄອບຄົວພາຍໃນບ້ານ 85% (ແປດສິບຫ້າສ່ວນຮ້ອຍ) ຂຶ້ນໄປມີອາຊີບໃດໜຶ່ງທີ່ໝັ້ນຄົງ ເຊັ່ນ: ການປູກຝັງ, ການລ້ຽງສັດ, ປູກເຄື່ອງປ່າຂອງດົງ, ປູກຕົ້ນໄມ້, ການປະມົງ ແລະອື່ນໆທີ່ສາມາດສ້າງລາຍຮັບໄດ້ຕາມລະດັບມາດຕະຖານການພັດທະນາທີ່ ລັດຖະບານ ກຳນົດອອກໃນແຕ່ລະໄລຍະ;
6. ມີກອງທຶນພັດທະນາບ້ານ ຫຼືກອງທຶນໝູນວຽນ ຫຼືກຸ່ມທ້ອນເງິນ ທີ່ປະຊາຊົນສາມາດເຂົ້າເຖິງການບໍລິການດ້ານສິນເຊື່ອໄດ້ຢ່າງສະດວກ;
7. ຈຳນວນຄອບຄົວພາຍໃນບ້ານສ່ວນໃຫຍ່ ໄດ້ນຳໃຊ້ກົນຈັກ ເຂົ້າໃນການຜະລິດກະສິກຳ ແລະປ່າໄມ້ ດ້ວຍເຄື່ອງມື ແລະອຸປະກອນທີ່ທັນສະໄໝ ຕິດພັນກັບການຂະຫຍາຍເນື້ອທີ່ໃຫ້ກວ້າງຂວາງ ເພື່ອຍົກສູງປະສິດທິຜົນຂອງການຜະລິດ;
8. ມີການຈັດຕັ້ງກຸ່ມການຜະລິດ, ສະຫະກອນການຜະລິດ ຫຼືສະຫະກອນບໍລິການ, ຜູ້ປະກອບການດ້ານກະສິກຳໃດໜຶ່ງ ທີ່ສາມາດສ້າງລາຍຮັບຢ່າງໝັ້ນຄົງ ຢູ່ພາຍໃນບ້ານ;
9. ເງື່ອນໄຂອື່ນ ຕາມສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ ເຊັ່ນ: ມີສູນ ຫຼືສະຖານີບໍລິການເຕັກນິກກະສິກຳ ແລະປ່າໄມ້ ຢູ່ໃນບ້ານ ຫຼືກຸ່ມບ້ານ ເພື່ອຮັບໃຊ້ບໍລິການປະຊາຊົນ ເປັນປົກກະຕິ, ໃນບ່ອນທີ່ມີລະບົບຊົນລະປະທານ ປະຊາຊົນ ຮູ້ຄຸ້ມຄອງ-ນຳໃຊ້ ແລະບໍລິຫານຈັດການ ເພື່ອຫຼຸດຕົ້ນທຶນການຜະລິດ, ສັດລ້ຽງ ໄດ້ຮັບການລ້ຽງດູເອົາໃຈໃສ່ເປັນຢ່າງດີ ໂດຍມີ ຄອກ, ແຫຼ່ງອາຫານ ແລະສັດລ້ຽງໄດ້ຮັບການສັກຢາກັນພະຍາດແຕ່ 60% (ຫົກສິບສ່ວນຮ້ອຍ) ຂຶ້ນໄປ, ຖ້າເປັນບ້ານທີ່ມີແຫຼ່ງນ້ຳ ຕ້ອງມີວັງສະຫງວນສຳລັບການປະມົງ.

## ໝວດທີ 3
## ວິທີຈັດຕັ້ງປະຕິບັດ

### ມາດຕາ 5 ການສະເໜີ, ການຢັ້ງຢືນ ແລະການຮັບຮອງ

**ຄອບຄົວຕົວແບບດ້ານກະສິກຳ ແລະປ່າໄມ້** ແມ່ນ ນາຍບ້ານ ເປັນຜູ້ສະເໜີຕໍ່ເຈົ້າເມືອງ ເພື່ອພິຈາລະນາຮັບຮອງເອົາ ບົນພື້ນຖານການກວດກາ, ປະເມີນຜົນ ແລະຢັ້ງຢືນຈາກຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ.

**ບ້ານພັດທະນາດ້ານກະສິກຳ ແລະປ່າໄມ້** ແມ່ນ ເຈົ້າເມືອງ ເປັນຜູ້ສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນ ເພື່ອພິຈາລະນາຮັບຮອງເອົາ ບົນພື້ນຖານການກວດກາ, ປະເມີນຜົນ ແລະຢັ້ງຢືນຈາກ ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ.

### ມາດຕາ 6 ການປັບປຸງ ແລະປ່ຽນແປງມາດຕະຖານ

ມາດຕະຖານຄອບຄົວຕົວແບບ ແລະບ້ານພັດທະນາດ້ານກະສິກຳ ແລະປ່າໄມ້ ສະບັບນີ້ ອາດຈະມີການປັບປຸງ ຫຼືປ່ຽນແປງດ້ານມາດຕະຖານ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະໄລຍະ.

# ໝວດທີ 4
# ບົດບັນຍັດສຸດທ້າຍ

**ມາດຕາ 7 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມສົ່ງເສີມກະສິກຳ ແລະສະຫະກອນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະທ້ອງຖິ່ນ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ; ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ແລະປະເມີນຜົນ.

ໃນການຈັດຕັ້ງປະຕິບັດຕົວຈິງຫາກເຫັນວ່າ ຈຸດໃດຍັງບໍ່ທັນສອດຄ່ອງເໝາະສົມກໍໃຫ້ສະເໜີລາຍງານໄປຍັງການນຳກະຊວງ ເພື່ອປັບປຸງແກ້ໄຂໃຫ້ທັນເວລາ.

ຫ້ອງການກະຊວງ, ບັນດາກົມ, ສະຖາບັນອ້ອມຂ້າງກະຊວງ, ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ, ຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ, ເທດສະບານ ແລະພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການສະໜັບສະໜູນ ແລະຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຄວາມຮັບຜິດຊອບຂອງໃຜລາວ.

**ມາດຕາ 8 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ລັດຖະມົນຕີວ່າການ ກະຊວງກະສິກຳ ແລະປ່າໄມ້**

ວິໄລວັນ ພົມເຂ